ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 280 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20-12-2010

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ສະບັບປັບປຸງ.**

~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດ ໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 135/ສພຊ, ລົງວັນທີ 15 ທັນວາ 2010 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບປັບປຸງ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 75/ຄປຈ, ລົງວັນທີ 16 ທັນວາ 2010.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍ ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບປັບປຸງ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 135 /ສພຊ

# ມະຕິຕົກລົງ

**ຂອງ**

**ສະພາແຫ່ງຊາດ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ກ່ຽວກັບການຕົກລົງຮັບຮອງເອົາ**

**ກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບປັບປຸງ**

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບປັບປຸງ ໃນວາລະປະຊຸມຕອນບ່າຍຂອງວັນທີ 15 ທັນວາ 2010,

**ກອງປະຊຸມໄດ້ຕົກລົງ:**

**ມາດຕາ 1.** ຮັບຮອງເອົາກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

**ມາດຕາ 2.** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 15 ທັນວາ 2010

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ

ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 05 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 15 ທັນວາ 2010

# ກົດໝາຍ

## ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ1(ປັບປຸງ). ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ເພື່ອຮັບປະກັນການປະຕິບັດສິດປະຊາທິປະໄຕທາງດ້ານການເມືອງຂອງພົນລະເມືອງລາວໃຫ້ໄດ້ຢ່າງເຕັມສ່ວນ ແລະ ຮັບປະກັນການເລືອກຕັ້ງໃຫ້ໄດ້ສະມາຊິກສະພາແຫ່ງຊາດ ຜູ້ທີ່ມີມາດຕະຖານຄົບຖ້ວນ, ແນໃສ່ປັບປຸງບູລະນະສະພາແຫ່ງຊາດ ໃຫ້ຫນັກແຫນ້ນ, ເຂັ້ມແຂງ, ເປັນອົງການຕົວແທນແຫ່ງສິດອຳນາດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ.

**ມາດຕາ 2( ໃໝ່). ການເລືອກຕັ້ງສະມາຊິກສະພາແຫ່ງຊາດ**

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແມ່ນ ຂະບວນການປະຕິບັດສິດປະຊາທິປະໄຕ ຂອງພົນລະເມືອງລາວ ໃນການເລືອກເອົາບຸກຄົນທີ່ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ສະບັບນີ້ ເຂົ້າຢູ່ສະພາແຫ່ງຊາດ ເພື່ອເປັນຕົວແທນໃນການປະຕິບັດສິດອຳນາດ ຂອງປະຊາຊົນບັນດາເຜົ່າ.

ມາດຕາ 3(ໃໝ່). ການອະທິບາຍຄຳສັບ

**ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:**

1. **ຫລັກການທົ່ວໄປ ໝາຍເຖິງ** ລະບຽບການ ທີ່ກຳນົດໃຫ້ປະຊາຊົນບັນດາເຜົ່າຜູ້ທີ່ມີສິດເລືອກຕັ້ງ ດຳເນີນການປ່ອນບັດໃນວັນ, ເວລາດຽວກັນ ລວມທັງວິທີການປ່ອນບັດ ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ ຍົກເວັ້ນ ກໍລະນີທີ່ໄດ້ກຳນົດໄວ້ສະເພາະ;

2. **ຫລັກການສະເໝີພາບ ໝາຍເຖິງ** ລະບຽບການທີ່ກຳນົດໃຫ້ພົນລະເມືອງລາວທຸກຄົນ ມີ ສິດເທົ່າທຽມກັນ ໃນການເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ໂດຍບໍ່ຈຳແນກເພດ, ເຜົ່າ, ຖານະທາງດ້ານສັງຄົມ, ລະດັບການສຶກສາ ແລະ ຄວາມເຊື່ອຖື;

3. **ຫລັກການໂດຍກົງ ໝາຍເຖິງ** ລະບຽບການທີ່ກຳນົດໃຫ້ປະຊາຊົນບັນດາເຜົ່າຜູ້ທີ່ມີສິດເລືອກຕັ້ງດຳເນີນການປ່ອນບັດດ້ວຍຕົນເອງ ເພື່ອເລືອກເອົາຜູ້ສະໝັກຮັບເລືອກຕັ້ງທີ່ຕົນເຫັນວ່າມີມາດຕະຖານຄົບຖ້ວນ ເປັນສະມາຊິກສະພາແຫ່ງຊາດ ຍົກເວັ້ນ ກໍລະນີທີ່ໄດ້ກຳນົດໄວ້ສະເພາະ;

4. **ຫລັກການລົງຄະແນນສຽງປິດລັບ ໝາຍເຖິງ** ລະບຽບການທີ່ກຳນົດໃຫ້ປະຊາຊົນບັນດາເຜົ່າຜູ້ທີ່ມີສິດເລືອກຕັ້ງລົງຄະແນນສຽງ ດ້ວຍການຕັດສິນໃຈຂອງຕົນເອງ ຢູ່ຫ້ອງລັບ ທີ່ຄະນະກຳມະການຈັດໄວ້;

5. **ດ້ວຍວິທີອື່ນ ໝາຍເຖິງ** ການຈັດລຽງລຳດັບຂອງຜູ້ສະໝັກຮັບເລືອກຕັ້ງ ຕາມຕຳແໜ່ງ, ຄຸນວຸດທິ ຫລື ການຈົກສະຫລາກ;

6. **ຜູ້ຖືກສານຕັດສິນລົງໂທດຕັດອິດສະລະພາບ ໝາຍເຖິງ** ຜູ້ຖືກສານຕັດສິນເປັນຜູ້ກະທຳຜິດ ແລະ ພວມປະຕິບັດໂທດຢູ່;

7. **ຂັ້ນທ້ອງຖິ່ນ ໝາຍເຖິງ** ຂັ້ນແຂວງ ແລະ ຂັ້ນເມືອງ;

8. **ບັດທີ່ບໍ່ສາມາດເຊື່ອຖືໄດ້ ໝາຍເຖິງ** ບັດທີ່ບໍ່ສາມາດຢັ້ງຢືນໄດ້ຢ່າງຊັດເຈນ ເຊັ່ນ: ບັດເປື້ອນ, ບັດສີກ ຂາດ, ບັດເກີນຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງຢູ່ໜ່ວຍປ່ອນບັດເລືອກຕັ້ງນັ້ນ.

ມາດຕາ 4(ໃໝ່). ນະໂຍບາຍຂອງລັດກ່ຽວກັບການເລືອກຕັ້ງ

ລັດ ຊຸກຍູ້, ປຸກລະດົມປະຊາຊົນບັນດາເຜົ່າ ໃຫ້ມີຄວາມຕື່ນຕົວ ແລະ ເປັນເຈົ້າການນຳໃຊ້ສິດປະຊາທິປະໄຕທາງດ້ານການເມືອງຂອງຕົນເຂົ້າໃນການເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງໃຫ້ໄດ້ຢ່າງເຕັມສ່ວນ ແລະ ຮັບປະກັນຄວາມປອດໄພ.

ລັດ ສະໜອງງົບປະມານ, ພາຫານະ, ວັດຖຸອຸປະກອນທີ່ຈຳເປັນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການເລືອກຕັ້ງ.

**ມາດຕາ 5. ຫລັກການ ການເລືອກຕັ້ງ**

**ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນປະຕິບັດຕາມຫລັກການພື້ນຖານ ດັ່ງນີ້:**

1. ຫລັກການທົ່ວໄປ;
2. ຫລັກການສະເໝີພາບ;
3. ຫລັກການໂດຍກົງ;
4. ຫລັກການລົງຄະແນນສຽງປິດລັບ.

**ມາດຕາ 6(ປັບປຸງ). ຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງ**

ພົນລະເມືອງລາວທຸກຄົນ ໂດຍບໍ່ຈຳແນກເພດ, ເຜົ່າ, ຄວາມເຊື່ອຖື, ຖານະໃນສັງຄົມ, ທີ່ຕັ້ງພູມລຳເນົາ, ວິຊາຊີບ ລ້ວນແຕ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.

ສຳລັບຜູ້ມີສິດເລືອກຕັ້ງ ຕ້ອງມີອາຍຸ ແຕ່ສິບແປດປີ ຂຶ້ນໄປ.

ສຳລັບຜູ້ສະໝັກຮັບເລືອກຕັ້ງ ຕ້ອງມີອາຍຸແຕ່ ຊາວເອັດປີ ຂຶ້ນໄປ ແລະ ມີມາດຕະຖານ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍ ສະບັບນີ້.

**ມາດຕາ 7(ປັບປຸງ). ຜູ້ບໍ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ**

**ພົນລະເມືອງລາວທີ່ບໍ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ມີ ດັ່ງນີ້:**

1. ຜູ້ເປັນບ້າ, ເສຍຈິດ;
2. ຜູ້ຖືກສານຕັດສິນລົງໂທດຕັດອິດສະລະພາບ ຫລື ຖືກປົດສິດເລືອກຕັ້ງ ແລະ ສິດສະຫມັກຮັບເລືອກຕັ້ງ;
3. ຜູ້ບໍ່ຮອດກະສຽນອາຍຸ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 6 ຂອງກົດໝາຍສະບັບນີ້.

**ມາດຕາ 8(ປັບປຸງ). ສິດສະເໜີປົດ ຜູ້ໄດ້ຮັບການເລືອກຕັ້ງ**

ພາຍຫລັງ ທີ່ຜູ້ສະໝັກຮັບເລືອກຕັ້ງໄດ້ຮັບການເລືອກຕັ້ງແລ້ວ ຜູ້ເລືອກຕັ້ງມີສິດສະເຫນີປົດບຸກຄົນໃດໜຶ່ງ ໃນເຂດເລືອກຕັ້ງຂອງຕົນ ຖ້າເຫັນວ່າບຸກຄົນຜູ້ໄດ້ຮັບການເລືອກຕັ້ງນັ້ນ ຫາກມີການປະພຶດຕົນບໍ່ສົມກຽດສັກສີ ໂດຍມີຂໍ້ມູນຫລັກຖານທີ່ເຊື່ອຖືໄດ້, ແຕ່ຄຳສະເຫນີນັ້ນ ຕ້ອງໄດ້ຮັບການເຫັນດີຈາກຄະນະກຳມະການເລືອກຕັ້ງລະດັບຊາດ.

ຜູ້ສະເຫນີໃຫ້ປົດຜູ້ໄດ້ຮັບການເລືອກຕັ້ງນັ້ນ ກໍຕ້ອງຮັບຜິດຊອບຕໍ່ຄຳສະເຫນີຂອງຕົນ ຕາມລະບຽບກົດໝາຍ.

**ມາດຕາ 9(ໃໝ່). ການປົກປ້ອງຂອງຜູ້ໄດ້ຮັບການເລືອກຕັ້ງ**

ຜູ້ໄດ້ຮັບການເລືອກຕັ້ງໃດໜຶ່ງ ມີສິດປົກປ້ອງຕົນເອງ ດ້ວຍການອະທິບາຍ, ຊີ້ແຈງ, ໃຫ້ເຫດຜົນ ກ່ຽວກັບບັນຫາທີ່ຜູ້ເລືອກຕັ້ງສະເໜີໃຫ້ປົດຕົນນັ້ນຕໍ່ຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອພິຈາລະນາ.

**ມາດຕາ 10(ໃໝ່). ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍສະບັບນີ້.

## ໝວດທີ II
## ການກຳນົດຈຳນວນສະມາຊິກສະພາແຫ່ງຊາດ ແລະ ລະບຽບການ ກ່ຽວກັບຜູ້ສະໝັກຮັບເລືອກຕັ້ງ

**ມາດຕາ 11(ປັບປຸງ). ການກຳນົດຈຳນວນສະມາຊິກສະພາແຫ່ງຊາດ**

**ການກຳນົດຈຳນວນສະມາຊິກສະພາແຫ່ງຊາດ ໃຫ້ປະຕິບັດຕາມຫລັກການ ດັ່ງນີ້:**

1. ຮັບປະກັນການເຮັດວຽກເປັນໝູ່ຄະນະ;
2. ອີງໃສ່ ທີ່ຕັ້ງ, ຄວາມສຳຄັນ ແລະ ຈຸດພິເສດທາງດ້ານການເມືອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນະທຳ-ສັງຄົມຂອງແຕ່ລະແຂວງ, ນະຄອນ;
3. ອີງໃສ່ ພົນລະເມືອງຫ້າສິບພັນຄົນ ໃຫ້ມີສະມາຊິກສະພາແຫ່ງຊາດໜຶ່ງຄົນ ເປັນຕົວແທນ; ສຳລັບ ແຂວງ, ນະຄອນ ທີ່ມີພົນລະເມືອງ ບໍ່ເກີນ ໜຶ່ງຮ້ອຍຫ້າສິບພັນຄົນ ໃຫ້ມີສະມາຊິກສະພາແຫ່ງຊາດ ຢູ່ເຂດເລືອກຕັ້ງນັ້ນ ຢ່າງໜ້ອຍ ສາມ ຄົນ.

ຈຳນວນຜູ້ສະຫມັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ໃຫ້ມີຕົວແທນຂອງບັນດາຊັ້ນຄົນ, ເພດ, ໄວ, ເຜົ່າ ທັງຮັບປະກັນຫລັກການສົມທົບລະຫວ່າງການຄວບຕຳແໜ່ງ ແລະ ບໍ່ຄວບຕຳແໜ່ງ ໃນອັດຕາສ່ວນຢ່າງເໝາະສົມ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດຈຳນວນ ຜູ້ສະໝັກຮັບເລືອກຕັ້ງ ແລະ ຈຳນວນສະມາຊິກສະພາແຫ່ງຊາດໃນແຕ່ລະເຂດເລືອກຕັ້ງ ແລະ ປະທານປະເທດເປັນຜູ້ອອກລັດຖະດຳລັດປະກາດ ເປັນທາງການກ່ອນວັນເລືອກຕັ້ງຢ່າງຊ້າ ຫົກສິບ ວັນ.

**ມາດຕາ 12(ປັບປຸງ). ມາດຕະຖານຂອງຜູ້ສະໝັກຮັບເລືອກຕັ້ງ**

**ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ຕ້ອງມີມາດຕະຖານຄົບຖ້ວນ ດັ່ງນີ້:**

1. ເປັນຄົນລາວທີ່ມີສັນຊາດລາວ ແຕ່ອາຍຸ ຊາວເອັດປີຂຶ້ນໄປ;

2. ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄວາມຈົງຮັກພັກດີຕໍ່ແນວທາງປ່ຽນແປງໃຫມ່ຂອງພັກ, ຕັ້ງຕໍ່ບໍລິສຸດຕໍ່ປະເທດຊາດ ແລະ ຮັບໃຊ້ຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ, ມີຫລັກໝັ້ນມິດ-ສັດຕູຢ່າງຈະແຈ້ງ ແລະ ເດັດຂາດ;

3. ກຳແໜ້ນແນວທາງ, ແຜນນະໂຍບາຍຂອງພັກ ແລະ ລະບຽບກົດຫມາຍຂອງລັດ, ຮູ້ໂຄສະນາປຸກລະດົມຂວນເຊື່ອ ແລະ ສຶກສາອົບຮົມປະຊາຊົນ ໃຫ້ມີຄວາມຕື່ນຕົວເຂົ້າຮ່ວມໃນການຈັດຕັ້ງປະຕິບັດຕົວຈິງ;

4. ມີທັດສະນະມະຫາຊົນຢ່າງຖືກຕ້ອງ, ເປັນສັນຍາລັກແຫ່ງຄວາມສາມັກຄີປະຊາຊົນບັນດາເຜົ່າ, ມີແບບແຜນເຮັດວຽກທີ່ຕິດພັນກັບຮາກຖານ, ໃກ້ຊິດຕິດແທດກັບປະຊາຊົນ ແລະ ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນ;

5. ມີລະດັບຄວາມຮູ້, ຄວາມສາມາດອັນແນ່ນອນ ເພື່ອສາມາດຄົ້ນຄວ້າ ແລະປະກອບຄວາມເຫັນເຂົ້າໃນການປະຕິບັດສິດ ແລະ ຫນ້າທີ່ຂອງສະມາຊິກສະພາແຫ່ງຊາດ;

6. ມີສຸຂະພາບດີ ເພື່ອຮັບປະກັນການປະຕິບັດຫນ້າທີ່ວຽກງານ ທີ່ຕົນໄດ້ຮັບມອບຫມາຍຢ່າງເປັນປົກກະຕິ.

**ມາດຕາ 13(ປັບປຸງ). ການສະເຫນີລາຍຊື່ ແລະ ການຈັດລຽງເລກລຳດັບຂອງຜູ້ສະໝັກຮັບເລືອກຕັ້ງ**

ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ຂັ້ນທ້ອງຖິ່ນ ມີສິດຄົ້ນຄວ້າ, ທາບທາມ ແລະ ສະເຫນີລາຍຊື່ຜູ້ຕາງຫນ້າອົງການຂອງຕົນອອກສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຕໍ່ຄະນະກຳມະການເລືອກຕັ້ງຂັ້ນທ້ອງຖິ່ນ ໃນເຂດເລືອກຕັ້ງນັ້ນ ເພື່ອນຳສະເຫນີໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາ ແລະ ຕົກລົງ.

ສຳລັບບັນດາຂະແໜງການ ແລະ ອົງການຈັດຕັ້ງຕ່າງໆ ຂັ້ນສູນກາງນັ້ນ ກໍໃຫ້ຄົ້ນຄວ້າ, ທາບທາມ ແລະ ສະເຫນີລາຍຊື່ຜູ້ສະໝັກຮັບເລືອກຕັ້ງຕໍ່ຄະນະກຳມະການເລືອກຕັ້ງລະດັບຊາດ.

ການຈັດລຽງເລກລຳດັບຂອງຜູ້ສະໝັກຮັບເລືອກຕັ້ງ ໃນແຕ່ລະເຂດເລືອກຕັ້ງ ຈະດຳເນີນຕາມຕົວອັກສອນລາວ ຫລື ດ້ວຍວິທີອື່ນ ກໍໄດ້ ຕາມການຕົກລົງຂອງຄະນະກຳມະການເລືອກຕັ້ງລະດັບຊາດ.

**ມາດຕາ 14(ປັບປຸງ). ການປະກອບເອກະສານຂອງຜູ້ສະໝັກຮັບເລືອກຕັ້ງ**

**ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຕ້ອງປະກອບເອກະສານຕ່າງໆ ດັ່ງນີ້:**

1. ໃບຄຳຮ້ອງຂໍສະໝັກຮັບເລືອກຕັ້ງ;
2. ຊີວະປະຫວັດ;
3. ຮູບຂະໜາດ 6x9 ຊັງຕີແມັດ;
4. ໃບຢັ້ງຢືນທີ່ຢູ່;

5. ໃບແຈ້ງໂທດເລກທີ 3;

6. ໃບຢັ້ງຢືນສຸຂະພາບ.

**ມາດຕາ 15. ການປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງ**

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ສັງລວມບັນຊີລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ໃນທົ່ວປະເທດ ແລ້ວປະກາດເປັນທາງການຢ່າງຊ້າຫົກສິບວັນ ກ່ອນວັນເລືອກຕັ້ງ.

**ມາດຕາ 16(ປັບປຸງ). ການຄັດຄ້ານຜູ້ສະໝັກຮັບເລືອກຕັ້ງ**

ຜູ້ມີສິດປ່ອນບັດເລືອກຕັ້ງ ມີສິດຄັດຄ້ານ ຜູ້ສະໝັກຮັບເລືອກຕັ້ງ ໃນເຂດເລືອກຕັ້ງຂອງຕົນ ທີ່ຕົນເຫັນວ່າບໍ່ມີມາດຕະຖານຄົບຖ້ວນ ຫລື ມີການກະທຳ ຊຶ່ງເປັນການລະເມີດລະບຽບກົດໝາຍ ແລະ ແຕະຕ້ອງເຖິງສິດ ຜົນປະໂຫຍດຂອງປະຊາຊົນ ໂດຍມີຂໍ້ມູນຫລັກຖານທີ່ເຊື່ອຖືໄດ້ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດ ເຈັດວັນ ນັບແຕ່ວັນປະກາດ ລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນຕົ້ນໄປ.

ການຄັດຄ້ານນັ້ນ ໃຫ້ເຮັດເປັນລາຍລັກອັກສອນ ແລ້ວຍື່ນຕໍ່ຄະນະກຳມະການເລືອກຕັ້ງຂັ້ນເມືອງ ເພື່ອລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ພິຈາລະນາແກ້ໄຂພາຍໃນກຳນົດສາມວັນ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ນັ້ນ ຕ້ອງຮີບຮ້ອນສົ່ງໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ພິຈາລະນາແກ້ໄຂພາຍໃນກຳນົດ ຫ້າວັນ ນັບແຕ່ວັນໄດ້ຮັບຄຳຄັດຄ້ານເປັນຕົ້ນໄປ.

ຜູ້ຄັດຄ້ານ ຕ້ອງຮັບຜິດຊອບຕໍ່ຄຳຄັດຄ້ານຂອງຕົນ ຕາມລະບຽບກົດໝາຍ.

**ມາດຕາ 17(ປັບປຸງ). ການຈັດຕັ້ງໂຄສະນາຫາສຽງ**

ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ມີສິດ ແລະ ໜ້າທີ່ ຈັດຕັ້ງການໂຄສະນາຫາສຽງ ໃຫ້ຜູ້ສະໝັກຮັບເລືອກຕັ້ງໃນເຂດເລືອກຕັ້ງຂອງຕົນ ຕາມລະບຽບກົດໝາຍ.

ຜູ້ສະໝັກຮັບເລືອກຕັ້ງແຕ່ລະຄົນ ມີ ສິດໂຄສະນາຫາສຽງໃຫ້ແກ່ຕົນເອງ ຕາມລະບຽບການ ແລະ ບໍ່ໃຫ້ໂຄສະນາທັບຖົມ ຫລື ໃສ່ຮ້າຍປ້າຍສີຜູ້ສະຫມັກຮັບເລືອກຕັ້ງຄົນອື່ນ.

ການໂຄສະນາຫາສຽງ ໃຫ້ເລີ່ມພາຍຫລັງວັນປະກາດລາຍຊື່ຜູ້ສະຫມັກຮັບເລືອກຕັ້ງ ຕາມການຕົກລົງຂອງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຕ້ອງຢຸດຕິລົງກ່ອນວັນເລືອກຕັ້ງໜຶ່ງວັນ.

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ກຳນົດລະບຽບການຈັດຕັ້ງໂຄສະນາຫາສຽງ.

## ໝວດທີ III
## ການກຳນົດເຂດເລືອກຕັ້ງ ແລະ ໜ່ວຍປ່ອນບັດເລືອກຕັ້ງ

**ມາດຕາ 18(ປັບປຸງ). ການກຳນົດເຂດເລືອກຕັ້ງ**

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ໃຫ້ຖືເອົາແຂວງ, ນະຄອນ ເປັນເຂດເລືອກຕັ້ງ.

ພາຍຫລັງທີ່ມີການເລືອກຕັ້ງສຳເລັດແລ້ວ ຖ້າຫາກມີການຍຸບ ໂຮມເຂົ້າ ຫລື ສ້າງຕັ້ງແຂວງ, ນະຄອນຂຶ້ນໃໝ່ນັ້ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງກ່ຽວກັບການສັບຊ້ອນສະມາຊິກສະພາແຫ່ງຊາດ ໃນເຂດເລືອກຕັ້ງ ດັ່ງກ່າວ ໃຫ້ແທດເໝາະກັບສະພາບການຕົວຈິງ ເພື່ອຮັບປະກັນການປະຕິບັດໜ້າທີ່ໃນຖານະເປັນຕົວແທນແຫ່ງມານະຈິດ, ສິດ ຜົນປະໂຫຍດ ແລະ ຄວາມມຸ່ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າ ຢ່າງເປັນປົກກະຕິ.

**ມາດຕາ 19(ປັບປຸງ). ການກຳນົດໜ່ວຍປ່ອນບັດເລືອກຕັ້ງ**

ການກຳນົດໜ່ວຍປ່ອນບັດເລືອກຕັ້ງ ໃຫ້ຖືເອົາບ້ານເປັນຫລັກ, ບ້ານໃດທີ່ມີຜູ້ມີສິດເລືອກຕັ້ງແຕ່ຫ້າຮ້ອຍເຖິງໜຶ່ງພັນຄົນ ໃຫ້ຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ, ຖ້າຫາກ ຫລາຍກວ່າໜຶ່ງພັນຄົນຂຶ້ນໄປ ໃຫ້ຈັດຕັ້ງເປັນຫລາຍໜ່ວຍປ່ອນບັດເລືອກຕັ້ງ.

ສຳລັບບ້ານທີ່ຢູ່ໃກ້ຄຽງກັນ ຊຶ່ງມີຈຳນວນຜູ້ມີສິດເລືອກຕັ້ງໜ້ອຍກວ່າຫ້າຮ້ອຍຄົນນັ້ນ ໃຫ້ໂຮມເຂົ້າກັນ ແລ້ວຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ.

ໃນກໍລະນີບ້ານທີ່ຢູ່ຫ່າງໄກສອກຫລີກ, ການໄປມາມີຄວາມຫຍຸ້ງຍາກຫລາຍນັ້ນ ອາດຈະຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ ຫລື ຈັດຕັ້ງເປັນໜ່ວຍຮັບຜິດຊອບຫີບບັດເຄື່ອນທີ່ເພື່ອໄປຮັບເອົາບັດລົງຄະແນນສຽງຂອງຜູ້ມີສິດເລືອກຕັ້ງກໍໄດ້.

ໜ່ວຍປ່ອນບັດເລືອກຕັ້ງ ສຳລັບພົນລະເມືອງລາວທີ່ພວມປະຕິບັດໜ້າທີ່ ແລະ ດຳລົງຊີວິດຢູ່ຕ່າງປະເທດ ແມ່ນຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ກຳນົດ.

**ມາດຕາ 20(ປັບປຸງ). ການກຳນົດໜ່ວຍປ່ອນບັດເລືອກຕັ້ງຢູ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ຄະນະກອງບັນຊາການ ກອງພົນ, ກອງພັນ, ກອງຮ້ອຍເອກະລາດ ແລະ ຄະນະກອງບັນຊາການແຂວງ, ນະຄອນ ເປັນຜູ້ກຳນົດໜ່ວຍປ່ອນບັດເລືອກຕັ້ງຢູ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງຕົນ ແລ້ວແຈ້ງເປັນລາຍລັກອັກສອນໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງທີ່ຄະນະກອງນັ້ນຕັ້ງຢູ່ ເພື່ອຮັບຮູ້ ແລະ ສັງລວມເຂົ້າບັນຊີລາຍຊື່ ໃນຈຳນວນໜ່ວຍປ່ອນບັດເລືອກ ຕັ້ງ ຂອງເມືອງນັ້ນ.

ສຳລັບກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຖ້າຫາກມີຄວາມຈຳເປັນຈັດຕັ້ງໜ່ວຍປ່ອນບັດເລືອກຕັ້ງສະເພາະນັ້ນ ກໍໃຫ້ຫ້ອງວ່າການກະຊວງດັ່ງກ່າວ ເປັນຜູ້ກຳນົດ ແລ້ວແຈ້ງເປັນລາຍລັກອັກສອນ ໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງບ່ອນທີ່ກະຊວງນັ້ນ ຕັ້ງຢູ່ ເພື່ອຮັບຮູ້.

## ໝວດທີ IV
## ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ

**ມາດຕາ 21(ປັບປຸງ). ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ**

ອົງການປົກຄອງບ້ານ ເປັນຜູ້ຮັບຜິດຊອບການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ ໃນຂອບເຂດບ້ານຂອງຕົນ.

ຜູ້ມີສິດເລືອກຕັ້ງແຕ່ລະຄົນ ມີສິດຈົດຊື່ຂອງຕົນ ຢູ່ໜ່ວຍປ່ອນບັດເລືອກຕັ້ງໜ່ວຍດຽວເທົ່ານັ້ນ.

ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ ຕ້ອງໃຫ້ແລ້ວ ແລະ ຕິດປະກາດເປັນທາງການ ຢູ່ພາຍໃນບ້ານຂອງຕົນ.

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ປະກາດຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງ ໃນຂອບເຂດທົ່ວປະເທດ ກ່ອນວັນເລືອກຕັ້ງ ຢ່າງຊ້າ ສີ່ສິບຫ້າ ວັນ.

**ມາດຕາ 22(ປັບປຸງ). ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງຢູ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ຄະນະກອງບັນຊາການ ກອງພົນ, ກອງພັນ, ກອງຮ້ອຍເອກະລາດ ແລະ ຄະນະກອງບັນຊາການແຂວງ, ນະຄອນ ເປັນຜູ້ຮັບຜິດຊອບການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລ້ວແຈ້ງເປັນລາຍລັກອັກສອນໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ທີ່ຄະນະກອງ ດັ່ງກ່າວນັ້ນ ຕັ້ງຢູ່ ເພື່ອຮັບຮູ້.

**ມາດຕາ 23(ປັບປຸງ). ການຂໍປ່ຽນໜ່ວຍປ່ອນບັດເລືອກຕັ້ງຢູ່ບ່ອນໃໝ່**

ພາຍຫລັງທີ່ໄດ້ປະກາດບັນຊີລາຍຊື່ຜູ້ມີສິດເລືອກຕັ້ງແລ້ວ ຖ້າຜູ້ໃດຜູ້ໜຶ່ງ ຫາກຖືກຍົກຍ້າຍ ຫລື ໄປເຮັດວຽກງານຢູ່ບ່ອນອື່ນນັ້ນ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ ຫລື ຄະນະກອງ ສຳລັບກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ບ່ອນທີ່ຕົນໄດ້ຂຶ້ນບັນຊີ ເພື່ອຂໍເອົາໃບຢັ້ງຢືນໄປລົງຄະແນນສຽງ ຢູ່ໜ່ວຍປ່ອນບັດເລືອກຕັ້ງບ່ອນໃໝ່.

## ໝວດທີ V
## ການຈັດຕັ້ງຄະນະກຳມະການເລືອກຕັ້ງ

**ມາດຕາ 24(ປັບປຸງ). ລະບົບການຈັດຕັ້ງຂອງຄະນະກຳມະການເລືອກຕັ້ງ**

**ຄະນະກຳມະການເລືອກຕັ້ງສະມາຊິກສະພາແຫ່ງຊາດ ມີ ລະບົບ ດັ່ງນີ້:**

1. ຄະນະກຳມະການເລືອກຕັ້ງລະດັບຊາດ;
2. ຄະນະກຳມະການເລືອກຕັ້ງຂັ້ນແຂວງ;
3. ຄະນະກຳມະການເລືອກຕັ້ງຂັ້ນເມືອງ;
4. ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ.

ການປະກອບຄະນະກຳມະການເລືອກຕັ້ງແຕ່ລະຂັ້ນ ໃຫ້ມີຕົວແທນຈາກອົງການພັກ, ອົງການລັດ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ. ສຳລັບຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຂັ້ນແຂວງນັ້ນ ຍັງໃຫ້ມີຕົວແທນ ຈາກສະພາແຫ່ງຊາດຢູ່ສູນກາງ ແລະ ທ້ອງຖິ່ນ ຕື່ມອີກ.

ຄະນະກຳມະການເລືອກຕັ້ງແຕ່ລະຂັ້ນ ມີສິດສ້າງຕັ້ງອະນຸກຳມະການ ເພື່ອເປັນກົງຈັກຊ່ວຍວຽກຂອງຕົນ ຕາມຄວາມເໝາະສົມ.

**ມາດຕາ 25(ປັບປຸງ). ການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ແລ້ວສະເໜີປະທານປະເທດ ອອກລັດຖະດຳລັດປະກາດເປັນທາງການ ຢ່າງຊ້າຮ້ອຍຊາວວັນກ່ອນວັນເລືອກຕັ້ງ.

ຄະນະກຳມະການເລືອກຕັ້ງລະດັບຊາດ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ, ແຕ່ຈຳນວນຄະນະກຳມະການບໍ່ໃຫ້ເກີນ ສິບເຈັດ ຄົນ.

**ມາດຕາ 26(ປັບປຸງ). ສິດ ແລະ ໜ້າທີ່ຂອງຄະນະກຳມະການເລືອກຕັ້ງລະດັບຊາດ**

**ຄະນະກຳມະການເລືອກຕັ້ງລະດັບຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ, ວາງທິດທາງ, ແຜນການເຄື່ອນໄຫວ, ອອກມະຕິຕົກລົງ, ຄຳແນະນຳ, ຄຳສັ່ງ, ແຈ້ງການຕ່າງໆ ກ່ຽວກັບການເລືອກຕັ້ງ;
2. ແນະນຳໃຫ້ແຂວງ, ນະຄອນ ແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນຂອງຕົນ;
3. ຈັດຕັ້ງການສຶກສາອົບຮົມທາງດ້ານການເມືອງ-ແນວຄິດ, ລະບຽບກົດໝາຍ ເພື່ອຮັບປະກັນການຍົກລະດັບການນຳໃຊ້ສິດປະຊາທິປະໄຕ ຂອງປະຊາຊົນບັນດາເຜົ່າ ແລະ ຮັບປະກັນຄວາມເປັນເອກະພາບ ກ່ຽວກັບວຽກງານເລືອກຕັ້ງ ໃຫ້ໄດ້ຮັບຜົນດີ;

4. ຊຸກຍູ້ ແລະ ປຸກລະດົມຂະບວນການດ້ານຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ໃນທົ່ວປະເທດ;
5. ກະກຽມ, ແບ່ງປັນງົບປະມານ, ແຈກຢາຍ ບັນດາເອກະສານ ແລະ ອຸປະກອນຮັບໃຊ້ການເລືອກຕັ້ງ;
6. ຄົ້ນຄວ້າພິຈາລະນາ ຄໍາຮ້ອງຂໍສະໝັກຮັບເລືອກຕັ້ງ ເພື່ອອະນຸມັດ ແລະ ປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງຢ່າງເປັນທາງການ;
7. ຄົ້ນຄວ້າພິຈາລະນາ ແລະ ແກ້ໄຂຄໍາຮ້ອງຂໍຕໍ່ວ່າຂອງຜູ້ມີສິດເລືອກຕັ້ງ ແລະ ຜູ້ມີສິດສະໝັກຮັບເລືອກຕັ້ງ ກ່ຽວກັບວຽກງານ ຂອງຄະນະກໍາມະການເລືອກຕັ້ງ;
8. ຊີ້ນໍາ, ນໍາພາ ແລະ ຕິດຕາມກວດກາການເຄື່ອນໄຫວວຽກງານ ຂອງຄະນະກໍາມະການເລືອກຕັ້ງຂັ້ນທ້ອງຖິ່ນໃນທົ່ວປະເທດ;
9. ສັງລວມ ແລະ ປະກາດຜົນຂອງການເລືອກຕັ້ງ;
10. ອອກບັດຢັ້ງຢືນຊົ່ວຄາວ ໃຫ້ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ;
11. ສະຫລຸບ, ຕີລາຄາ ແລະ ຖອດຖອນບົດຮຽນ ກ່ຽວກັບການເລືອກຕັ້ງ, ຍ້ອງຍໍສັນລະເສີນການຈັດຕັ້ງ ແລະ ບຸກຄົນທີ່ມີຜົນງານດີເດັ່ນ;
12. ລາຍງານຜົນສໍາເລັດຂອງການເລືອກຕັ້ງ ແລະ ຄຸນລັກສະນະຂອງຜູ້ໄດ້ຮັບເລືອກຕັ້ງ ຕໍ່ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດໃໝ່;
13. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ.

**ມາດຕາ 27(ປັບປຸງ). ການແຕ່ງຕັ້ງຄະນະກໍາມະການເລືອກຕັ້ງຂັ້ນທ້ອງຖິ່ນ**

ເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ ເປັນຜູ້ແຕ່ງຕັ້ງຄະນະກໍາມະການເລືອກຕັ້ງຂັ້ນຂອງຕົນ ແລ້ວປະກາດເປັນທາງການ ຢ່າງຊ້າເກົ້າສິບວັນ ກ່ອນວັນເລືອກຕັ້ງ.

ຄະນະກໍາມະການເລືອກຕັ້ງຂັ້ນແຂວງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກໍາມະການ, ແຕ່ຈໍານວນຄະນະກໍາມະການບໍ່ໃຫ້ເກີນ ສິບສາມ ຄົນ.

ຄະນະກໍາມະການເລືອກຕັ້ງຂັ້ນເມືອງ ປະກອບດ້ວຍປະທານ, ຮອງປະທານ ແລະ ກໍາມະການ, ແຕ່ຈໍານວນຄະນະກໍາມະການບໍ່ໃຫ້ເກີນ ສິບເອັດ ຄົນ.

**ມາດຕາ 28(ປັບປຸງ). ສິດ ແລະ ໜ້າທີ່ຂອງຄະນະກໍາມະການເລືອກຕັ້ງຂັ້ນທ້ອງຖິ່ນ**

**ຄະນະກໍາມະການເລືອກຕັ້ງຂັ້ນທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ຈັດຕັ້ງຜັນຂະຫຍາຍທິດທາງ, ແຜນການເຄື່ອນໄຫວ, ມະຕິຕົກລົງ, ຄໍາແນະນໍາ, ຄໍາສັ່ງ, ແຈ້ງການຕ່າງໆ ຂອງຄະນະກໍາມະການເລືອກຕັ້ງລະດັບຊາດ;

2. ຈັດຕັ້ງການສຶກສາອົບຮົມທາງດ້ານການເມືອງ-ແນວຄິດ, ລະບຽບກົດໝາຍ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນການຍົກລະດັບການນຳໃຊ້ສິດປະຊາທິປະໄຕ ຂອງປະຊາຊົນບັນດາເຜົ່າ ແລະ ຮັບປະກັນຄວາມເປັນເອກະພາບ ກ່ຽວກັບວຽກງານເລືອກຕັ້ງໃນຂັ້ນຂອງຕົນ;

3. ຊຸກຍູ້ ແລະປຸກລະດົມຂະບວນການດ້ານຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານເລືອກຕັ້ງໃນຂັ້ນຂອງຕົນ;

4. ຄຸ້ມຄອງ, ນຳໃຊ້ງົບປະມານ, ແຈກຢາຍບັນດາເອກະສານ ແລະ ອຸປະກອນຮັບໃຊ້ການເລືອກຕັ້ງ ໃນເຂດຂອງຕົນ;

5. ຊີ້ນຳ, ນຳພາ ແລະ ຕິດຕາມກວດກາການເຄື່ອນໄຫວວຽກງານຂອງຄະນະກຳມະການເລືອກຕັ້ງຂັ້ນລຸ່ມຕົນ;

6. ປະສານສົມທົບກັບກຳລັງປະກອບອາວຸດໃນຂັ້ນຂອງຕົນ ເພື່ອຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ;

7. ນຳພາການຈັດຕັ້ງໂຄສະນາຫາສຽງ ແລະ ແນະນຳຊີວະປະຫວັດຂອງຜູ້ສະໝັກຮັບເລືອກຕັ້ງໃຫ້ປະຊາຊົນຊາບ;

8. ພິຈາລະນາ ແກ້ໄຂຄຳຮ້ອງຂໍຕໍ່ວ່າຂອງຜູ້ມີສິດເລືອກຕັ້ງ ແລະຜູ້ມີສິດສະໝັກຮັບເລືອກຕັ້ງ ກ່ຽວກັບການປະຕິບັດວຽກງານເລືອກຕັ້ງໃນຂັ້ນຂອງຕົນ;

9. ສັງລວມຜົນຂອງການເລືອກຕັ້ງແລ້ວສົ່ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເທິງຖັດຕົນ ໃຫ້ທັນຕາມກຳນົດເວລາ;

10. ສະຫລຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ລາຍງານ ກ່ຽວກັບການເລືອກຕັ້ງ ໃຫ້ຂັ້ນເທິງຖັດຕົນ, ຈັດຕັ້ງການຍ້ອງຍໍສັນລະເສີນການຈັດຕັ້ງ ແລະ ບຸກຄົນທີ່ມີຜົນງານດີເດັ່ນໃນການປະຕິບັດວຽກງານເລືອກຕັ້ງ ໃນຂັ້ນຂອງຕົນ;

11. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ໃນທ້ອງຖິ່ນຂອງຕົນ.

**ມາດຕາ 29(ປັບປຸງ). ການແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ**

ເຈົ້າເມືອງ, ຫົວໜ້າເທດສະບານ ເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ໃນຂອບເຂດເມືອງ, ເທດສະບານຂອງຕົນ.

ຄະນະກອງບັນຊາການ ກອງພົນ, ກອງພັນ, ກອງຮ້ອຍເອກະລາດ ແລະ ຄະນະກອງບັນຊາການແຂວງ, ນະຄອນ, ຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ ແລະກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງຢູ່ໃນກຳລັງປະກອບອາວຸດ ແລ້ວແຈ້ງເປັນລາຍລັກອັກສອນ ໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງບ່ອນທີ່ຄະນະກອງ ແລະ ຫ້ອງວ່າການນັ້ນ ຕັ້ງຢູ່ ເພື່ອຮັບຮູ້.

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ, ກຳມະການ ແລະ ເລຂານຸການ ສອງ ຫລື ສາມ ຄົນ ແຕ່ຈຳນວນຄະນະຮັບຜິດຊອບ ບໍ່ໃຫ້ເກີນ ເຈັດຄົນ.

**ມາດຕາ 30(ປັບປຸງ). ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ**

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຊຸກຍູ້, ແນະນຳ, ສຶກສາອົບຮົມກົດໝາຍ, ລະບຽບກ່ຽວກັບການເລືອກຕັ້ງ ແລະ ຈັດຕັ້ງນຳພາຜູ້ມີສິດເລືອກຕັ້ງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໄປໃຊ້ສິດປ່ອນບັດເລືອກຕັ້ງຢ່າງຄົບຖ້ວນ ແລະ ຖືກຕ້ອງ;

2. ກະກຽມສະຖານທີ່ ແລະ ອຸປະກອນຮັບໃຊ້ການປ່ອນບັດເລືອກຕັ້ງ;

3. ຄຸ້ມຄອງ, ແຈກຢາຍ ບັດລົງຄະແນນສຽງ ໃຫ້ແກ່ຜູ້ມີສິດເລືອກຕັ້ງ;

4. ຮັບຜິດຊອບວຽກງານປ່ອນບັດເລືອກຕັ້ງ, ປະສານສົມທົບກັບກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໜ່ວຍປ່ອນບັດເລືອກຕັ້ງຂອງຕົນ;

5. ແກ້ໄຂຄຳສະເໜີ ຫລື ຄຳຮ້ອງຂໍ່ຕໍ່ວ່າຂອງຜູ້ມີສິດເລືອກຕັ້ງ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ນັບ, ກວດກາບັດ ແລະ ເຮັດບົດບັນທຶກຜົນຂອງການປ່ອນບັດເລືອກຕັ້ງ ຢູ່ ໜ່ວຍຂອງຕົນ ແລ້ວມອບບົດບັນທຶກ, ຕາປະທັບ ແລະ ເອກະສານອື່ນທີ່ສຳຄັນ ໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ;

7. ເກັບມ້ຽນບັດລົງຄະແນນສຽງທີ່ໄດ້ປ່ອນແລ້ວນັ້ນ ໄວ້ຈົນກວ່າອາຍຸການຂອງຄະນະກຳມະການເລືອກຕັ້ງໄດ້ສິ້ນສຸດລົງ ແລ້ວຈຶ່ງທຳລາຍຖິ້ມ;

8. ສະຫລຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ລາຍງານກ່ຽວກັບການເລືອກຕັ້ງ ໃຫ້ຄະນະກຳມະການເລືອກຕັ້ງ ຂັ້ນເມືອງ, ຄັດເລືອກຕົວເດັ່ນ ແລ້ວສະເໜີໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ພິຈາລະນາ ແລະ ສະເໜີຂັ້ນເທິງຕົກລົງຍ້ອງຍໍ.

**ມາດຕາ 31(ໃໝ່). ອາຍຸການຂອງຄະນະກຳມະການເລືອກຕັ້ງ**

ອາຍຸການ ຂອງຄະນະກຳມະການເລືອກຕັ້ງແຕ່ລະຂັ້ນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້ ຈະສິ້ນສຸດລົງ ພາຍຫລັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດນັ້ນ.

# ໝວດທີ VI
# ການກຳນົດວັນ ເວລາ ແລະ ລະບຽບການປ່ອນບັດເລືອກຕັ້ງ

**ມາດຕາ 32(ປັບປຸງ). ການກຳນົດວັນເລືອກຕັ້ງ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດວັນເລືອກຕັ້ງ ແລ້ວສະເໜີປະທານປະເທດອອກ ລັດຖະດຳລັດປະກາດ ຢ່າງເປັນທາງການ ກ່ອນວັນເລືອກຕັ້ງ ໜຶ່ງຮ້ອຍສາມສິບວັນ.

ການເລືອກຕັ້ງ ແມ່ນດຳເນີນໃນວັນດຽວກັນຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍຖືເອົາວັນເສົາ ຫລື ວັນອາທິດເປັນວັນເລືອກຕັ້ງ.

ໃນກໍລະນີທີ່ມີຄວາມຈຳເປັນ ຄະນະປະຈຳສະພາແຫ່ງຊາດ ອາດຈະກຳນົດວັນເລືອກຕັ້ງສະເພາະກ່ອນ ຫລື ຫລັງ ວັນເລືອກຕັ້ງທີ່ໄດ້ກຳນົດໄວ້ນັ້ນກໍໄດ້.

**ມາດຕາ 33. ການກຳນົດເວລາປ່ອນບັດເລືອກຕັ້ງ**

ເວລາດຳເນີນການປ່ອນບັດເລືອກຕັ້ງ ແມ່ນເລີ່ມແຕ່ເຈັດໂມງເຊົ້າ ຫາ ສິບເຈັດໂມງແລງ.

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ອາດຈະຕົກລົງໄຂພິທີ ຫລື ອັດພິທີໄວ ຫລື ຊ້າກວ່າເວລາທີ່ໄດ້ກຳນົດໄວ້ນັ້ນກໍໄດ້ ໂດຍອີງໃສ່ສະພາບການຕົວຈິງຂອງແຕ່ລະບ່ອນ ແຕ່ບໍ່ໃຫ້ໄຂພິທີ ກ່ອນຫ້າໂມງເຊົ້າ ແລະ ອັດພິທີ ຊ້າກວ່າ ສິບເກົ້າໂມງແລງ.

**ມາດຕາ 34. ລະບຽບການປ່ອນບັດເລືອກຕັ້ງ**

**ລະບຽບການປ່ອນບັດເລືອກຕັ້ງ ມີ ດັ່ງນີ້:**

1. ສະຖານທີ່ປ່ອນບັດເລືອກຕັ້ງ ໃຫ້ຈັດໃສ່ບ່ອນທີ່ເຫັນວ່າເໝາະສົມ ແລະ ສະດວກດີ ເຊັ່ນ: ໂຮງຮຽນ, ສະໂມສອນ, ວັດ ຫລື ສະຖານທີ່ອື່ນ;
2. ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງແນະນຳ, ເຜີຍແຜ່ລະບຽບການຕ່າງໆ ແລະ ວິທີລົງຄະແນນສຽງ ໃຫ້ຜູ້ມີສິດເລືອກຕັ້ງທຸກຄົນເຂົ້າໃຈ;
3. ກ່ອນການປ່ອນບັດນັ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງໄຂຫີບບັດ ໂດຍຊ້ອງໜ້າປະຊາຊົນ;
4. ຜູ້ມີສິດເລືອກຕັ້ງ ຕ້ອງສະເໜີຕົວ ແລະ ແຈ້ງບັດຢັ້ງຢືນຕໍ່ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ເພື່ອຮັບເອົາບັດລົງຄະແນນສຽງ;
5. ສຳລັບຜູ້ມີສິດເລືອກຕັ້ງ ທີ່ບໍ່ຮູ້ໜັງສື ຊຶ່ງບໍ່ສາມາດຂີດບັດດ້ວຍຕົນເອງໄດ້ນັ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ມີສິດແຕ່ງຕັ້ງຜູ້ຮັບຜິດຊອບຊ່ວຍຂີດບັດ, ແຕ່ຕ້ອງປະຕິບັດ ຕາມຄວາມມັກ ແລະ ການຊີ້ບອກຂອງຜູ້ນັ້ນ ແລະ ໃຫ້ຜູ້ກ່ຽວນຳເອົາບັດລົງຄະແນນສຽງໄປປ່ອນ ໃສ່ຫີບບັດດ້ວຍຕົນເອງ.

ໃນກໍລະນີທີ່ປ່ອນບັດດ້ວຍຕົນເອງບໍ່ໄດ້ ແມ່ນມອບໃຫ້ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງຜູ້ໃດຜູ້ໜຶ່ງຊ່ວຍນຳເອົາບັດໄປປ່ອນໃສ່ຫີບບັດ ໂດຍຊ້ອງໜ້າຜູ້ກ່ຽວ;

6. ໃນກໍລະນີ ທີ່ຜູ້ມີສິດເລືອກຕັ້ງ ເຈັບປ່ວຍ, ເສຍອົງຄະ, ເຖົ້າແກ່ໄປປ່ອນບັດບໍ່ໄດ້ນັ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງຈັດຕັ້ງໜ່ວຍຮັບຜິດຊອບຫີບບັດເຄື່ອນທີ່ໄປຮັບເອົາບັດລົງຄະແນນສຽງກັບທີ່;

7. ຖ້າຜູ້ມີສິດເລືອກຕັ້ງຫາກຂີດບັດຜິດ ຕ້ອງສົ່ງບັດທີ່ຂີດຜິດນັ້ນຄືນ ແລ້ວຂໍເອົາບັດໃໝ່ນຳ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ;

8. ຜູ້ມີສິດເລືອກຕັ້ງ ຕ້ອງປ່ອນບັດລົງຄະແນນສຽງໃສ່ຫີບບັດ ເທື່ອລະຄົນ.

**ມາດຕາ 35. ການແກ້ໄຂກໍລະນີສຸກເສີນຢູ່ບ່ອນປ່ອນບັດເລືອກຕັ້ງ**

ໃນເວລາດຳເນີນການປ່ອນບັດເລືອກຕັ້ງນັ້ນ ຖ້າຫາກມີກໍລະນີສຸກເສີນຢ່າງຮ້າຍແຮງເກີດຂຶ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງປະກາດໂຈະການປ່ອນບັດໃນທັນທີ, ແຕ່ຕ້ອງພິຈາລະນາແກ້ໄຂກໍລະນີດັ່ງກ່າວ ໃຫ້ສຳເລັດ ເພື່ອສາມາດສືບຕໍ່ການປ່ອນບັດນັ້ນໄດ້. ຖ້າຫາກບໍ່ສາມາດແກ້ໄຂໄດ້ນັ້ນກໍໃຫ້ປະກາດງົດການປ່ອນບັດເລືອກຕັ້ງ ແລ້ວລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ພິຈາລະນາ ໃນທັນທີ ເພື່ອແກ້ໄຂ ຫລື ກຳນົດວັນເວລາເລືອກຕັ້ງໃໝ່.

## ໝວດທີ VII
## ການນັບຄະແນນສຽງ ແລະ ການປະກາດຜົນການເລືອກຕັ້ງ

**ມາດຕາ 36. ການນັບຄະແນນສຽງ**

ການນັບຄະແນນສຽງ ຕ້ອງດຳເນີນຢ່າງເປີດເຜີຍ ໂດຍຊ້ອງໜ້າພະຍານຢ່າງໜ້ອຍ ສາມຄົນ ທີ່ມາຈາກຜູ້ມີສິດເລືອກຕັ້ງຂອງໜ່ວຍປ່ອນບັດເລືອກຕັ້ງນັ້ນ, ແຕ່ຫາກບໍ່ແມ່ນຜູ້ສະໝັກຮັບເລືອກຕັ້ງ.

ນັກຂ່າວ ແລະ ຜູ້ຕາງໜ້າຂອງຜູ້ສະໝັກຮັບເລືອກຕັ້ງ ຈະເຂົ້າຮ່ວມສັງເກດການ ແລະ ຕິດຕາມການນັບຄະແນນສຽງກໍໄດ້.

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງແບ່ງໜ້າທີ່ຮັບຜິດຊອບໃນການນັບຄະແນນສຽງດັ່ງນີ້: ຜູ້ໜຶ່ງອ່ານ, ຜູ້ໜຶ່ງກວດກາຄືນ, ຜູ້ໜຶ່ງຂຽນ ແລະ ຜູ້ອື່ນໆນັ້ນ ເປັນຜູ້ຕິດຕາມ ແລະ ບັນທຶກ.

**ມາດຕາ 37(ປັບປຸງ). ບັດລົງຄະແນນສຽງທີ່ບໍ່ຖືກຕ້ອງ**

**ບັດລົງຄະແນນສຽງ ທີ່ບໍ່ຖືກຕ້ອງ ມີ ດັ່ງນີ້ :**

1. ບໍ່ມີຕາປະທັບຂອງໜ່ວຍປ່ອນບັດເລືອກຕັ້ງນັ້ນ;

2. ຂີດຊື່ຜູ້ສະໝັກຮັບເລືອກຕັ້ງເກີນ ຫລື ຫລຸດຈຳນວນທີ່ໄດ້ກຳນົດໄວ້;

3. ບໍ່ຂີດຊື່ຜູ້ສະໝັກຮັບເລືອກຕັ້ງ;

4. ບໍ່ສາມາດເຊື່ອຖືໄດ້.

**ມາດຕາ 38(ປັບປຸງ). ບົດບັນທຶກຜົນການປ່ອນບັດເລືອກຕັ້ງ**

**ບົດບັນທຶກຜົນການປ່ອນບັດເລືອກຕັ້ງ ມີ ເນື້ອໃນ ດັ່ງນີ້:**

1. ເວລາໄຂ ແລະ ອັດພິທີ ປ່ອນບັດເລືອກຕັ້ງ;
2. ລາຍຊື່ຜູ້ສະໝັກຮັບເລືອກຕັ້ງ;
3. ຈຳນວນຜູ້ມີສິດເລືອກຕັ້ງທັງໝົດ;
4. ຈຳນວນຜູ້ມາປ່ອນບັດເລືອກຕັ້ງຕົວຈິງ;
5. ຈຳນວນບັດລົງຄະແນນສຽງ ທີ່ໄດ້ຮັບຕົວຈິງ;
6. ຈຳນວນບັດລົງຄະແນນສຽງ ທີ່ຂີດຜິດ ຊຶ່ງໄດ້ນຳມາປ່ຽນເອົາບັດໃໝ່;
7. ຈຳນວນບັດລົງຄະແນນສຽງ ທີ່ຖືກຕ້ອງ;
8. ຈຳນວນບັດລົງຄະແນນສຽງ ທີ່ບໍ່ຖືກຕ້ອງ;
9. ຈຳນວນຄະແນນສຽງຂອງຜູ້ສະໝັກຮັບເລືອກຕັ້ງແຕ່ລະຄົນ;
10. ຈຳນວນຄຳຮ້ອງຂໍຕໍ່ວ່າທີ່ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງໄດ້ແກ້ໄຂແລ້ວ ແລະ ຄຳຮ້ອງຂໍຕໍ່ວ່າທີ່ບໍ່ທັນໄດ້ແກ້ໄຂ ພ້ອມດ້ວຍເຫດຜົນ ( ຖ້າຫາກມີ ).

ບົດບັນທຶກ ດັ່ງກ່າວ ຕ້ອງມີລາຍເຊັນຂອງຫົວໜ້າຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ, ເລຂານຸການ ແລະ ພະຍານສາມຄົນ ທີ່ເຂົ້າຮ່ວມໃນການກວດກາບັດ. ບົດບັນທຶກນັ້ນສະບັບໜຶ່ງສົ່ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ແລະ ອີກສະບັບໜຶ່ງມອບໃຫ້ນາຍບ້ານເກັບຮັກສາໄວ້.

**ມາດຕາ 39. ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ**

ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແມ່ນຜູ້ທີ່ໄດ້ຮັບຄະແນນສຽງຫລາຍກວ່າຕາມລຳດັບ ຈົນຄົບຕາມຈຳນວນທີ່ຕ້ອງການເລືອກເອົາ ໃນແຕ່ລະເຂດເລືອກຕັ້ງ.

ໃນກໍລະນີທີ່ຄະແນນສຽງ ຂອງຜູ້ຢູ່ໃນອັນດັບສຸດທ້າຍຂອງຈຳນວນທີ່ຕ້ອງການ ໃນເຂດເລືອກຕັ້ງໃດໜຶ່ງຫາກເທົ່າກັນນັ້ນ ໃຫ້ຕັດສິນເອົາຜູ້ມີອາຍຸການຫລາຍກວ່າ, ແຕ່ໃນກໍລະນີທີ່ອາຍຸການຫາກເທົ່າກັນແມ່ນໃຫ້ເອົາຜູ້ມີອາຍຸກະສຽນສູງກວ່າ ເປັນສະມາຊິກສະພາແຫ່ງຊາດ.

**ມາດຕາ 40(ໃໝ່). ການປະກາດຜົນການເລືອກຕັ້ງ**

ພາຍຫລັງ ຄະນະກຳມະການເລືອກຕັ້ງຂັ້ນທ້ອງຖິ່ນ ໄດ້ສຳເລັດການນັບຄະແນນສຽງ ເປັນທີ່ຖືກຕ້ອງ ແລະ ຮຽບຮ້ອຍແລ້ວ ກໍໃຫ້ສົ່ງບົດບັນທຶກຜົນການເລືອກຕັ້ງໄປຍັງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອສັງລວມ ແລະ ປະກາດຜົນການເລືອກຕັ້ງ ຢ່າງເປັນທາງການ.

## ໝວດທີ VIII
## ການເລືອກຕັ້ງແທນ

**ມາດຕາ 41(ປັບປຸງ). ການເລືອກຕັ້ງແທນ**

**ການເລືອກຕັ້ງແທນ ຈະໄດ້ຈັດຂຶ້ນເມື່ອສະມາຊິກສະພາແຫ່ງຊາດ ໃນເຂດເລືອກຕັ້ງໃດໜຶ່ງຫາກຫລຸດຈຳນວນລົງ ທີ່ເນື່ອງມາຈາກ ກໍລະນີ ດັ່ງນີ້:**

1. ເສຍຊີວິດ;
2. ລາອອກ;
3. ຖືກປົດອອກຈາກການເປັນສະມາຊິກສະພາແຫ່ງຊາດ.

ການເລືອກຕັ້ງແທນ ຈະດຳເນີນໄດ້ ກໍຕໍ່ເມື່ອໄດ້ຮັບສຽງເຫັນດີຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ແລະ ອາຍຸການຂອງສະພາແຫ່ງຊາດຊຸດນັ້ນ ຫາກຍັງເຫລືອຢ່າງໜ້ອຍ ສາມປີ ຂອງອາຍຸການທັງໝົດ ນັບແຕ່ວັນກໍລະນີທີ່ໄດ້ກຳນົດໄວ້ໃນວັກເທິງນີ້ເກີດຂຶ້ນ.

**ມາດຕາ 42(ປັບປຸງ). ວິທີການເລືອກຕັ້ງແທນ**

**ການເລືອກຕັ້ງແທນ ມີ ສອງ ວິທີ ດັ່ງນີ້:**

1. ຕາມວິທີທົ່ວໄປ

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ແລະ ກຳນົດວັນເລືອກຕັ້ງແທນ.

ການດຳເນີນການເລືອກຕັ້ງແທນນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບນີ້.

2. ຕາມວິທີສະເພາະ

ໃນກໍລະນີທີ່ບໍ່ສາມາດດຳເນີນການເລືອກຕັ້ງແທນຕາມວິທີທົ່ວໄປໄດ້ນັ້ນ ແມ່ນ ໃຫ້ປະຕິບັດດັ່ງນີ້:

- ເຂດເລືອກຕັ້ງທີ່ກ່ຽວຂ້ອງເລືອກເອົາຜູ້ສະໝັກຮັບເລືອກຕັ້ງທີ່ໄດ້ຮັບຄະແນນສຽງຫຼາຍ ຖັດຈາກຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ໃນເຂດເລືອກຕັ້ງນັ້ນ;

- ຜູ້ສະໝັກຮັບເລືອກຕັ້ງດັ່ງກ່າວ ຕ້ອງໄດ້ຮັບຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນຜູ້ມາປ່ອນບັດເລືອກຕັ້ງ;

- ຜູ້ສະໝັກຮັບເລືອກຕັ້ງດັ່ງກ່າວ ຕ້ອງຮັກສາໄດ້ມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້;

- ເຂດເລືອກຕັ້ງທີ່ກ່ຽວຂ້ອງ ນຳສະເໜີບຸກຄົນດັ່ງກ່າວ ເພື່ອໃຫ້ຄະນະປະຈຳສະພາແຫ່ງຊາດ ສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງເອົາເປັນສະມາຊິກສະພາແຫ່ງຊາດ ຕາມລະບຽບກົດໝາຍ.

## ໝວດທີ IX (ໃໝ່)
## ຂໍ້ຫ້າມ

**ມາດຕາ 43(ໃໝ່). ຂໍ້ຫ້າມ ສຳລັບ ຜູ້ມີສິດເລືອກຕັ້ງ**

**ຫ້າມຜູ້ມີສິດເລືອກຕັ້ງ ມີ ການກະທຳ ຕົ້ນຕໍ ດັ່ງນີ້:**

1. ບິດເບືອນ ແນວທາງ ນະໂຍບາຍ ແລະ ຄວາມເປັນຈິງກ່ຽວກັບການເລືອກຕັ້ງ;
2. ໂຄສະນາ ໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ສະໝັກຮັບເລືອກຕັ້ງ;
3. ປັ່ນປ່ວນ, ສ້າງສະຖານະການ ກໍ່ຄວາມບໍ່ສະຫງົບ ເປັນຕົ້ນໃນໜ່ວຍເລືອກຕັ້ງຂອງຕົນ;
4. ແຊກແຊງ ການຂີດບັດລົງຄະແນນສຽງ ຂອງຜູ້ອື່ນ;
5. ຂີດບັດລົງຄະແນນສຽງ ຂອງຕົນ ແບບຊະຊາຍ ຫລື ບໍ່ຖືກຕ້ອງຕາມລະບຽບການ;
6. ຮັບສິນບົນ.

**ມາດຕາ 44(ໃໝ່). ຂໍ້ຫ້າມ ສຳລັບ ຜູ້ສະໝັກຮັບເລືອກຕັ້ງ**

**ຫ້າມ ຜູ້ສະໝັກຮັບເລືອກຕັ້ງ ມີ ການກະທຳ ຕົ້ນຕໍ ດັ່ງນີ້:**

1. ໂຄສະນາ ໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ສະໝັກຮັບເລືອກຕັ້ງຄົນອື່ນ;
2. ຊື້ຈ້າງ, ຈອບອອຍ ຜູ້ມີສິດເລືອກຕັ້ງ ດ້ວຍຮູບການຕ່າງໆ;
3. ໂຄສະນາຫາສຽງ ໃນວັນເລືອກຕັ້ງ;
4. ເຂົ້າຫຍຸ້ງກ່ຽວການນັບບັດລົງຄະແນນສຽງຂອງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ;
5. ໃຫ້ສິນບົນ.

**ມາດຕາ 45(ໃໝ່). ຂໍ້ຫ້າມ ສຳລັບ ຄະນະກຳມະການເລືອກຕັ້ງ**

ຫ້າມ ຄະນະກຳມະການເລືອກຕັ້ງ ມີ ການກະທຳ ຕົ້ນຕໍ ດັ່ງນີ້:

1. ລຳອຽງ, ເຂົ້າຂ້າງອອກຂາ ຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງເປັນຕົ້ນໃນເວລານັບບັດລົງຄະແນນສຽງ;
2. ໃສ່ຮ້າຍປ້າຍສີ, ທັບຖົມບິດບາດ ແລະ ຊື່ສຽງຂອງຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງ;
3. ຂີດບັດແທນຜູ້ມີສິດເລືອກຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;
4. ອັດຫີບບັດກ່ອນກຳນົດເວລາ ທີ່ຜູ້ມີສິດເລືອກຕັ້ງ ຍັງບໍ່ທັນໄດ້ມາໃຊ້ສິດປ່ອນບັດເລືອກຕັ້ງຢ່າງຄົບຖ້ວນ ຕາມບັນຊີ;
5. ປະຕິບັດສິດ ແລະ ໜ້າທີ່ຂອງຕົນເກີນຂອບເຂດ ທີ່ໄດ້ກຳນົດໄວ້;
6. ເມີນເສີຍຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ການຄຸ້ມຄອງ ງົບປະມານ, ອຸປະກອນຮັບໃຊ້ການເລືອກຕັ້ງ;
7. ຮັບສິນບົນ.

**ມາດຕາ 46(ໃໝ່). ຂໍ້ຫ້າມ ສຳລັບ ບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ ແລະ ການຈັດຕັ້ງອື່ນ ມີ ການກະທຳ ຕົ້ນຕໍ ດັ່ງນີ້:

1. ເຂົ້າໄປຫຍຸ້ງກ່ຽວໃນເວລາຜູ້ມີສິດເລືອກຕັ້ງດຳເນີນການຂີດບັດ;
2. ໂຄສະນາຫາສຽງໃຫ້ຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງໃນວັນເລືອກຕັ້ງ ແລະ ເວລາດຳເນີນການປ່ອນບັດ;
3. ກໍ່ຄວາມວຸ້ນວາຍ ໃນການດຳເນີນການເລືອກຕັ້ງ ອັນເປັນການລະເມີດລະບຽບກົດໝາຍ;
4. ຍຸແຍ່, ຊວນເຊື່ອ ໃຫ້ຜູ້ສະໝັກຮັບເລືອກຕັ້ງ ໃນເຂດດຽວກັນນັ້ນ ມີຄວາມເຂົ້າໃຈຜິດ ຊຶ່ງກັນ ແລະ ກັນ ນຳໄປເຖິງການແບ່ງແຍກຄວາມສາມັກຄີພາຍໃນ;
5. ຮັບສິນບົນ ຫລື ການຊື້ຈ້າງ ຈາກຜູ້ສະໝັກຮັບເລືອກຕັ້ງດ້ວຍຮູບການຕ່າງໆ.

## ໝວດທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 47(ປັບປຸງ). ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນໃນການເຂົ້າຮ່ວມຂະບວນການໂຄສະນາ, ປ້ອງກັນຄວາມສະຫງົບ, ປະກອບສ່ວນທຶນຮອນ ໃຫ້ແກ່ການເລືອກຕັ້ງ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 48(ປັບປຸງ). ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບການເລືອກຕັ້ງ ຈະຖືກປະຕິບັດ ມາດຕະການສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ມາດຕະການທາງວິໄນ, ທາງແພ່ງ ຫລື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫລື ໜັກ.

## ໝວດທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 49(ປັບປຸງ). ງົບປະມານຮັບໃຊ້ການເລືອກຕັ້ງ**

ງົບປະມານຮັບໃຊ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແມ່ນ ງົບປະມານຂອງລັດ.

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ແບ່ງປັນງົບປະມານດັ່ງກ່າວ ໃຫ້ແຕ່ລະເຂດເລືອກຕັ້ງ ຕາມເງື່ອນໄຂຕົວຈິງ ແລະ ຢ່າງເໝາະສົມ.

**ມາດຕາ 50. ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ອອກຄຳແນະນຳ ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 51. ຜົນສັກສິດ**

ກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບເລກທີ 01/ ສພຊ ລົງວັນທີ 11 ຕຸລາ 2001.

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ທອງສິງ ທຳມະວົງ